ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 56/ສພຂ.ຊຍ
ໄຊຍະບູລີ, ວັນທີ 28 ສິງຫາ 2023

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດ ວຽກງານກາງສະໄໝ ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຂອງສະພາປະຊາຊົນແຂວງ ຊຸດທີ II

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 60 ກອງປະຊຸມສະໄໝສາມັນ ປະຈຳທຶກເດືອນຕົ້ນປີ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ມະຕິຂອງກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 08/ສພຂ.ຊຍ, ລົງວັນທີ 30 ເມສາ 2021 ວ່າດ້ວຍການຮັບຮອງເອົາ ທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025).
- ອີງຕາມ ແຜນວຽກຈຸດສຸມ ປະຈຳປີ 2023 ຂອງຄະນະປະຈຳສະພາປະຊາຊົນ ແລະ ທິດທາງແຜນການ ສະບັບເລກທີ 36/ຄປຈ.ຊຍ, ລົງວັນທີ 3 ມີນາ 2023.
- ອີງຕາມ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ຄປຈ, ລົງວັນທີ 17 ກໍລະກົດ 2023.

ຜ່ານການພິຈາລະນາຢ່າງເລິກເຊິ່ງ, ຖີ່ຖ້ວນ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ການເຄື່ອນໄຫວວຽກງານ ກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງວັນທີ 23-26 ສິງຫາ 2023.

ກອງປະຊຸມ ຕົກລົງ:

**ມາດຕາ 1:** ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານກາງສະໄໝ ຂອງແຜນການ 5 ປີ (2021-2025)

ກອງປະຊຸມເຫັນດີ ຮັບຮອງເອົາບົດລາຍງານ ການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານກາງສະໄໝ ຂອງແຜນການ 5 ປີ(2021-2025) ເຊິ່ງໄດ້ເອົາໃຈໃສ່ປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນສຳເລັດຫຼາຍດ້ານ ເປັນຕົ້ນ: ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ 22 ຄັ້ງ ມີ 40 ສະບັບ, ພິຈາລະນາ ແລະ ຮັບຮອງນິຕິກຳໃຕ້ກົດໝາຍຂອງແຂວງ 13 ສະບັບ, ປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍໄດ້ 8 ສະບັບ, ສ້າງນິຕິກຳໃຕ້ກົດໝາຍ ຮັບໃຊ້ວຽກງານສະພາປະຊາຊົນແຂວງ 8 ສະບັບ, ປັບປຸງກົນໄກປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ແນວລາວສ້າງຊາດແຂວງ ແລະ ພະແນກການ, ອົງການ, ກົມກອງ 29 ສະບັບ ມີ 32 ພາກສ່ວນ; ດຳເນີນກອງປະຊຸມຄັ້ງປະຖົມມະລືກ ຂອງສະພາປະຊາຊົນແຂວງ ຊຸດທີ II ເພື່ອຮັບຮອງເອົາໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງສະພາປະຊາຊົນແຂວງ, ອົງການປົກຄອງແຂວງ; ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງ ໄດ້ 68 ເນື້ອໃນ, ຮັບຮອງເອົາມະຕິ 24 ສະບັບ; ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງໂຍກຍ້າຍ ບຸກຄະລາກອນ ຂອງແຂວງ ໄດ້ 20 ທ່ານ, ຍິງ 2 ທ່ານ; ຕິດຕາມກວດກາ ໂຄງການລົງທຶນຂອງລັດ 20 ຄັ້ງ ມີ 37 ໂຄງການ, ຕິດຕາມໂຄງການຂຸດຄົ້ນແຮ່ທາດ; ຈັດຕັ້ງການແກ້ໄຂຄຳຮ້ອງຂໍຄວາມເປັນທຳ,

ຄຳສະເໜີ ແລະ ໂທລະສັບສາຍດ່ວນໄດ້ 394 ເລື່ອງ, ພວມສືບຕໍ່ແກ້ໄຂ 7 ເລື່ອງ; ຕິດຕາມກວດກາວາລະແຫ່ງຊາດ ໄດ້ 9 ພາກສ່ວນ ແລະ 5 ເມືອງ; ໃຫ້ຄະແນນຕໍ່ບຸກຄະລາກອນທີ່ຂຶ້ນລາຍງານ ແລະ ຊີ້ແຈງຕໍ່ກອງປະຊຸມສະພາປະຊາຊົນແຂວງໄດ້ 86 ເປົ້າໝາຍ, ຍິງ 15 ເປົ້າໝາຍ; ເຂົ້າຮ່ວມຝຶກອົບຮົມຫົວຂໍ້ຕ່າງໆ ໄດ້ 58 ຄັ້ງ ແລະ ສະພາປະຊາຊົນແຂວງຈັດຂຶ້ນ ໄດ້ 3 ຄັ້ງ; ປັບປຸງກົງຈັກຊ່ວຍວຽກ ຂອງສະພາປະຊາຊົນແຂວງ ສຳເລັດ 10 ຂະແໜງການ; ລົງພິມປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະພາປະຊາຊົນແຂວງ ໄດ້ 487 ຈຸດ; ກວມເອົາ 458 ບ້ານ, ມີຜູ້ເຂົ້າຮ່ວມທັງໝົດ 68.104 ຄົນ, ຍິງ 30.198 ຄົນ, ລະດົມ ວັດຖຸ ແລະ ເງິນສົດ ເພື່ອຊ່ວຍເຫຼືອ ກົມກອງ ແລະ ຜູ້ມີສິດເລືອກຕັ້ງ ມູນຄ່າ 208.250.000 ກີບ. ໄດ້ຍາດແຍ່ງງົບປະມານມາພັດທະນາພື້ນຖານໂຄງລ່າງ ຂອງສະພາປະຊາຊົນແຂວງ 350 ກວ່າລ້ານກີບ. ນອກນັ້ນ, ຍັງໄດ້ເຂົ້າຮ່ວມສະຫຼອງປີສາມັກຄີ ລາວ-ຫວຽດນາມ ປະຈຳປີ 2022 ປະຕິບັດໄດ້ 3 ກິດຈະກຳ 5 ແຜນວຽກ; ໄດ້ເຂົ້າຮ່ວມຕ້ອນຮັບຄະນະຜູ້ແທນ ຈາກ 3 ແຂວງ ຂອງ ສສ ຫວຽດນາມ ແລະ ກິດຈະກຳອື່ນໆ ໄດ້ 3 ຄັ້ງ, ຈັດສົ່ງພະນັກງານ ສະພາປະຊາຊົນແຂວງ ໄປຍົກລະດັບພາສາຫວຽດນາມ 12 ທ່ານ, ຍິງ 3 ທ່ານ.

ມາດຕາ 2: ຮັບຮອງເອົາທິດທາງແຜນການທ້າຍສະໄໝ.

ເພື່ອບັນລຸເປົ້າໝາຍ ແລະ ທິດທາງລວມ ສະພາປະຊາຊົນແຂວງ ໄດ້ວາງ 5 ແຜນງານ ດັ່ງນີ້:

**<u>ແຜນງານທີ</u> 1: ສືບຕໍ່ຍົກສູງປະສິດທິພາບ, ຄຸນນະພາບ ໃນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງໃນໄລຍະໃໝ່ ໃຫ້ມີຄວາມຍືນຍົງ.**

- ເພີ່ມທະວີຍົກສູງຄວາມຮັບຜິດຊອບໃນການປະກອບຄຳເຫັນໃສ່ຮ່າງການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 65 ສະບັບ, ໃນນີ້ ສ້າງໃໝ່ 22 ສະບັບ, ປັບປຸງ 43 ສະບັບ ທີ່ຈະໄດ້ຈັດຂຶ້ນໃນແຕ່ລະປີ. ພ້ອມທັງ ຊຸກຍູ້ອົງການປົກຄອງແຂວງ ສ້າງນິຕິກຳໃຕ້ກົດໝາຍ ໃຫ້ໄດ້ 5 ສະບັບຂຶ້ນໄປ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາປະຊາຊົນແຂວງໃຫ້ໄດ້ 2 ສະບັບຂຶ້ນໄປ.

- ເພີ່ມທະວີຄວາມຮັບຜິດຊອບຕໍ່ ພະແນກການ, ອົງການ, ກົມກອງ ສະເໜີສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ແນໃສ່ຮັບປະກັນໃນການພິຈາລະນາ ແລະ ຮັບຮອງໃຫ້ມີຄຸນນະພາບ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າພາຍໃນແຂວງ. ພ້ອມທັງ ຊຸກຍູ້ການຈັດຕັ້ງການປະເມີນບັນດານິຕິກຳໃຕ້ກົດໝາຍ ທີ່ໄດ້ຮັບຮອງໄປແລ້ວນັ້ນ ໃຫ້ໄດ້ຮັບການປັບປຸງສອດຄ່ອງກັບສະພາບຄວາມເປັນຈິງໃນປະຈຸບັນ.

ເພື່ອຮັບປະກັນໃຫ້ບັນລຸຕາມແຜນການດັ່ງກ່າວ ຕ້ອງໄດ້ເອົາໃຈໃສ່ບາງວຽກງານ ເປັນຕົ້ນ: ຈັດຕັ້ງປະຕິບັດຂັ້ນຕອນ ແລະ ວິທີການ ຕາມກົດໝາຍກຳນົດ, ເປັນເຈົ້າການປະສານສົມທົບກັບອົງການທີ່ມີສິດສະເໜີສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຜັນຂະຫຍາຍເປັນວຽກລະອຽດ, ຈັດກອງປະຊຸມສຳມະນາ, ທາບທາມຄວາມຄິດເຫັນບັນດາເປົ້າໝາຍໃຫ້ກວ້າງຂວາງ.

**<u>ແຜນງານທີ</u> 2: ສືບຕໍ່ຮັບປະກັນການຕົກລົງບັນຫາພື້ນຖານສຳຄັນຂອງແຂວງ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ, ລັດຖະທຳມະນູນ ແລະ ກົດໝາຍ ຮັບປະກັນໃຫ້ແຂວງ ມີການພັດທະນາຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ຍືນຍົງ.**

ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນໃນແຕ່ລະໄລຍະ ຕ້ອງຮັບປະກັນໃຫ້ມີຄຸນນະພາບ, ສ່ອງແສງເຖິງການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ຄັ້ງທີ VII ຂອງອົງຄະນະພັກແຂວງ ເປັນຕົ້ນແມ່ນ: ການພິຈາລະນາ, ຮັບຮອງການຊັບຊ້ອນກົງຈັກການຈັດຕັ້ງບຸກຄະລາກອນ ຂອງອົງການປົກຄອງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ໂຄງການລົງທຶນຂອງລັດ ແລະ ອື່ນໆ.

ເພື່ອຮັບປະກັນໃນການຕົກລົງບັນຫາສຳຄັນຂອງແຂວງ ຈະຕ້ອງໄດ້ເອົາໃຈໃສ່ສະໜອງຂໍ້ມູນໃຫ້ມີຄວາມຖືກຕ້ອງຊັດເຈນ ແລະ ຄົບຖ້ວນ, ນຳສົ່ງເອກະສານມາ ຍັງສະພາປະຊາຊົນແຂວງໃຫ້ທັນເວລາ ເພີ່ມທະວີຄວາມຮັບຜິດຊອບ ຂອງສະມາຊິກສະພາປະຊາຊົນແຂວງໃຫ້ສູງຂຶ້ນ ເປັນຕົ້ນ: ການເກັບກຳຂໍ້ມູນ, ການຄົ້ນຄວ້າ-ພິຈາລະນາ, ການພົວພັນ ກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລື ແລະ ເອກະພາບກ່ຽວກັບເນື້ອໃນແຕ່ລະບັນຫາ ກ່ອນຈະນຳເຂົ້າກອງປະຊຸມສະພາ ບວກກັບການເສີມຂະຫຍາຍຄວາມເປັນເຈົ້າການ ຂອງກົງຈັກທີ່ເປັນເສນາທິການ ໃນການຄົ້ນຄວ້າ, ວິເຄາະ - ວິໄຈຂໍ້ມູນໃຫ້ລະອຽດເລິກເຊິ່ງ ແລະ ມີຄຸນນະພາບ.

ແຜນງານທີ 3: ສືບຕໍ່ຍົກສູງຄຸນນະພາບ ການຕິດຕາມກວດກາ ຂອງສະພາປະຊາຊົນແຂວງ ຕໍ່ກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ.

ຍົກສູງຄຸນນະພາບໃນການຕິດຕາມກວດກາ ຂອງສະມາຊິກສະພາປະຊາຊົນແຂວງ ແນ່ໃສ່ເຮັດໃຫ້ການຕິດຕາມກວດກາໄດ້ຮັບການແກ້ໄຂຢ່າງເຂັ້ມງວດ, ຄະນະປະຈຳສະພາປະຊາຊົນແຂວງ ຈະຕ້ອງສຸມໃສ່ຕິດຕາມເນື້ອໃນ ດັ່ງນີ້:

- ຕິດຕາມກວດກາ, ຊຸກຍູ້ ການເຄື່ອນໄຫວ ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງການແຕ່ງຕັ້ງ, ການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ.

- ຕິດຕາມກວດກາຊຸກຍູ້ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ແລະ ບັນດາໂຄງການລົງທຶນຂອງລັດ ເປັນແຕ່ລະໄລຍະ.

- ສືບຕໍ່ຕິດຕາມກວດກາ, ຊຸກຍູ້ ການແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ແລະ ໂທລະສັບສາຍດ່ວນຂອງປະຊາຊົນບັນດາເຜົ່າ.

- ເອົາໃຈໃສ່ພົບປະ, ເກັບກຳບັນຫາຄຳສະເໜີ, ຄຳເຫັນຂອງປະຊາຊົນ ແລະ ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ການໂຄສະນາຫາສຽງ ການກະກຽມເລືອກຕັ້ງ ໃນນີ້: ສະມາຊິກສະພາແຫ່ງຊາດ ໃຫ້ໄດ້ 70%, ສະມາຊິກສະພາປະຊາຊົນແຂວງ ໃຫ້ໄດ້ 95% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ.

- ຊຸກຍູ້ອົງການປົກຄອງແຂວງ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງການສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ພ້ອມທັງເຂົ້າຮ່ວມການສະຫຼຸບຖອດຖອນ ແຜນການຕິດຕາມກວດກາວາລະແຫ່ງຊາດ.

ເພື່ອເຮັດໃຫ້ການປະຕິບັດໜ້າທີ່ດັ່ງກ່າວ ມີປະສິດທິພາບ ກ່ອນອື່ນຕ້ອງໄດ້ວາງແຜນຫົວຂໍ້ໃນການຕິດຕາມກວດກາ ໂດຍການພິຈາລະນາ ແລະ ຮັບຮອງໃນກອງປະຊຸມ, ຜັນຂະຫຍາຍເປັນແຜນການເຄື່ອນໄຫວຢ່າງລະອຽດ ມີຈຸດສຸມ, ຊຸກຍູ້ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເປັນເຈົ້າການໃນການຕິດຕາມກວດກາບັນຫາຕ່າງໆ ພາຍໃນເຂດເລືອກຕັ້ງຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ຊຸກຍູ້ໃຫ້ຂະແໜງການກ່ຽວຂ້ອງ ແກ້ໄຂຜົນການຕິດຕາມ, ກວດກາຢ່າງເຂັ້ມງວດ ແລະ ເດັດຂາດຕາມລະບຽບກົດໝາຍ.

ແຜນງານທີ 4: ສືບຕໍ່ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ການຄົ້ນຄວ້າບຸກຄະລາກອນ ອອກສະໝັກເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ຊຸດທີ III.

- ເອົາໃຈໃສ່ຍົກລະດັບຄວາມຮູ້, ບຳລຸງຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ ທີ່ເປັນເສນາທິການຊ່ວຍວຽກ ດ້ວຍການຍາດແຍ່ງທຶນຮອນ ຈາກພາກລັດ ເພື່ອຍົກລະດັບວິຊາສະເພາະ, ທິດສະດີການເມືອງ - ການປົກຄອງ, ເຂົ້າຮ່ວມຝຶກອົບຮົມນຳສະພາແຫ່ງຊາດ, ເປັນເຈົ້າການຝຶກອົບຮົມຢູ່ຂັ້ນທ້ອງຖິ່ນ, ຄົ້ນຄວ້າ ແລະ ຊັບຊ້ອນພະນັກງານ - ລັດຖະກອນ ບັນຈຸເຂົ້າໃນຕຳແໜ່ງງານໃຫ້ເໝາະສົມ ໂດຍອີງໃສ່ຄວາມຮູ້ - ຄວາມສາມາດ ແລະ ຄວາມເປັນຈິງ ຂອງແຕ່ລະເຂດເລືອກຕັ້ງ.

- ຜັນຂະຫຍາຍກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຊິກສະພາປະຊາຊົນແຂວງ ເພື່ອເປັນເຄື່ອງມືໃນການເຄື່ອນໄຫວວຽກງານໃຫ້ມີຄຸນນະພາບ.

- ຄົ້ນຄວ້າກຳນົດນະໂຍບາຍທີ່ຈຳເປັນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນແຂວງ.

- ການຄົ້ນຄວ້າບຸກຄະລາກອນ ອອກສະໝັກເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ຕ້ອງຮັບປະກັນດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ຄວບຄູ່ກັບຄວາມຮູ້ - ຄວາມສາມາດ, ປະສົບການ ແລະ ຄວນຮັກສາຜູ້ເກົ່າລົງສະໝັກໃຫ້ກວມຈຳນວນຫຼາຍ ຈະເຮັດໃຫ້ການສ້າງຄວາມເຂັ້ມແຂງ ຂອງສະມາຊິກສະພາປະຊາຊົນແຂວງມີຄວາມຍືນຍົງ.

ແຜນງານທີ 5: ສືບຕໍ່ເພີ່ມທະວີການພົວພັນ ກັບສະພາແຫ່ງຊາດ, ອົງການປົກຄອງແຂວງ ເພື່ອການຮ່ວມມື ກັບບັນດາປະເທດເພື່ອນມິດຍຸດທະສາດ ຕາມແນວທາງການຕ່າງປະເທດຂອງພັກ - ລັດວາງອອກ.

- ສືບຕໍ່ເພີ່ມທະວີພົວພັນ ກັບສະພາແຫ່ງຊາດ, ອົງການປົກຄອງແຂວງ ໃນການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານບົດຮຽນ, ທຶນຮອນ ນໍາມາພັດທະນາບຸກຄະລາກອນ, ເຕັກນິກວິຊາການ, ພື້ນຖານໂຄ່ງລ່າງ ແລະ ວຽກງານອື່ນໆ ໃຫ້ຫຼາຍຂຶ້ນ.

ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີປະສິດທິພາບ ຄະນະປະຈໍາສະພາປະຊາຊົນແຂວງ ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ ແລະ ກໍາແໜ້ນນະໂຍບາຍການຕ່າງປະເທດຂອງພັກ - ລັດ; ວາງແຜນການ ວຽກງານການຕ່າງປະເທດຢ່າງມີຈຸດສຸມ, ຄົ້ນຄວ້າສະພາບການ ຂອງບັນດາປະເທດເພື່ອນມິດຍຸດທະສາດ ແລະ ສາກົນ; ເພີ່ມທະວີການພົວພັນ ກັບ ສະພາແຫ່ງຊາດ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານການຕ່າງປະເທດ ຂອງສະພາປະຊາຊົນແຂວງ ຊຸດທີ II ມີຄຸນນະພາບ ນໍາຜົນປະໂຫຍດມາພັດທະນາວຽກງານສະພາ ແລະ ນໍາຜົນປະໂຫຍດມາສູ່ປະຊາຊົນບັນດາເຜົ່າພາຍໃນແຂວງ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການ, ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

**ເພັງມີລັນ ຄໍາພັນເພັງ**